# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 16 ກໍຣະກົດ 2006 ( 7-16-2006 )

## <u>ຂ້າພະເຈົ້າຈະເດີນຕາມການນໍາພາຂອງພຣະເຈົ້າ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ອພຍ 13:17-18,20-22; 14:5-6,10,13-14,31-15:2,11-13 )

**<u>ຄວາມຈິງໃນພຣະຄັມພີ:</u>** ພຣະເຈົ້ານໍາພາ ແລະປ້ອງກັນໄພ່ພົນຂອງພຣະອົງໃນຂະນະທີ່ເຂົາຕິດຕາມການນໍາພາຂອງພຣະອົງ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ແມ່ນເພື່ອຊ່ອຍເຫລືອທ່ານໃຫ້ສະແດງອອກໃຫ້ເຫັນຄວາມເພິ່ງພາຂອງທ່ານໃນພຣະເຈົ້າດ້ວຍ:

- ການພິສູດໃຫ້ເຫັນວ່າພຣະເຈົ້າຊ່ອຍຄົນທີ່ເຊື່ອທັງຫລາຍໃຫ້ຮູ້ການນໍາພາຂອງພຣະອົງ; ແລະ
- ໃຫ້ທໍາແຜນເພື່ອສະແວງຫາ ແລະຕິດຕາມການນໍາພາຂອງພຣະເຈົ້າທຸກໆວັນ.

### <u>ຂ້າພະເຈົ້າຈະສາມາດຮູ້ຢ່າງຄັກແນ່ໄດ້ແນວໃດວ່າພຣະເຈົ້າຈະນໍາພາ ແລະປ້ອງກັນຂ້າພະເຈົ້າຖ້າວ່າຂ້າພະເຈົ້າຫາກຕິດຕາມພຣະອົງ?</u>

ພວກນັກສຶກສາທັງຫລາຍບາງເທື່ອໄດ້ສອບຖາມຂ້າພະເຈົ້າວ່າ ພຣະເຈົ້າໄດ້ສາມາດຮູ້ຢ່າງໃດວ່າແມ່ນຫຍັງໃນອະນາຄົດຂອງພວກເຮົາຖ້າຫາກບໍ່ມີການຮູ້ເຫັນລ່ວງໜ້າວ່າການກະທໍາຂອງພວກເຮົາຈະເປັນຢ່າງໃດ. ມັນຈະບໍ່ເປັນດັ່ງວ່າເພິ່ນເຮັດເຮົາໃຫ້ເປັນເຫມືອນດັ່ງຕຸກກະຕາທີ່ພຣະເຈົ້າເປັນຜູ້ດຶງເຊືອກບໍ ແທນທີ່ວ່າພວກເຮົາຈະເປັນຜູ້ມີອິສຣະພາບເອງ? ອັນນີ້ເປັນຄວາມເຂົ້າໃຈໄດ້ຍາກອັນນຶ່ງທີ່ພວກນັກຮຽນໄດ້ສູ້ຊົນເພື່ອຈະເຂົ້າໃຈໃນຫລາຍປີຜ່ານມານີ້. ອັນນີ້ແມ່ນສິ່ງທີ່ຂ້າພະເຈົ້າໄດ້ແບ່ງປັນໃຫ້ກັບພວກເຂົາເຈົ້າ:

ຈົ່ງຄິດວ່າກໍາລັງຂີ່ຣົດໄຟໄປຕາມລາງຂອງມັນ. ບ່ອນນັ່ງຂອງທ່ານນັ້ນຢູ່ທີ່ດ້ານຫລັງສຸດຂອງຕູ້ຣົດໄຟແລະປິ່ນໜ້າໄປເບື້ອງກົ້ນຣົດໄຟນັ້ນ. ທ່ານໄດ້ເຫັນຫຍັງແດ່? ທ່ານເຫັນສິ່ງທີ່ທ່ານໄດ້ເຄີຍຢູ່ມາແລ້ວ, ແລະໃນເວລາອັນວ່ອງໄວນັ້ນທ່ານໄດ້ເຫັນວ່າດຽວນີ້ທ່ານໄດ້ຢູ່ໃນບ່ອນໃຫມ່ເລື້ອຍໆ. ທ່ານບໍ່ທັນໄດ້ເຫັນວ່າບ່ອນທີ່ຢູ່ເບື້ອງໜ້າຈະເປັນຢ່າງໃດ. ອັນນີ້ແມ່ນສິ່ງທີ່ມະນຸດເຂົ້າໃຈເວລາໄດ້ຢ່າງໃດ. ລາວໄດ້ຢູ່ເທິງຣົດໄຟ; ລາວໄດ້ເຫັນສິ່ງທີ່ຜ່ານມາ, ສິ່ງໃນປັດຈຸບັນ, ແລະສິ່ງທີ່ເປັນອານາຄົດດ້ວຍຄວາມງ່າຍດາຍ.

ພຣະເຈົ້າຜູ້ທີ່ໄດ້ເບິ່ງລົງມາເຫັນລາງຣົດໄຟເບື້ອງໜ້າຂອງທ່ານ ແລະໄດ້ຮູ້ທຸກສິ່ງທຸກຢ່າງທີ່ມີຢູ່ຂ້າງໜ້າມີຄວາມປາຖນາຢ່າງທີ່ສຸດທີ່ຈະນໍາພາທ່ານ ແລະພ້ອມທີ່ຈະສິດສອນທ່ານ ເຊັ່ນດຽວກັບທີ່ພຣະອົງໄດ້ກະທໍາພວກພວກອິສຣະເອັນໃນສມັຍບູຮານ. ໃນບົດຮຽນວັນນີ້ ພວກເຮົາຈະໄດ້ເຫັນຫລາຍທາງທີ່ພຣະເຈົ້າໄດ້ຈັດຕຽມການນໍາພາແລະປ້ອງກັນສໍາລັບໄພ່ພົນຂອງພຣະອົງ.

### <u>ສຶກສາພຣະຄັມພີ</u>

### 1. <u>ພຣະເຈົ້າໄດ້ເຂົ້າໃຈເຣື່ອງຄວາມອ່ອນແອຂອງພວກເຮົາ</u> ( ອພຍ 13:17-18 )

ແຕ່ບົດທີ 7 ຈົນຮອດບົດທີ 11 ຂອງພຣະທັມອົພະຍົບໄດ້ບັນທຶກການປະເຊີນໜ້າກັນຂອງໂມເຊແລະອາຣອນກັບຟາໂຣພ້ອມດ້ວຍການສະແດງອອກອັນໜ້າອັສະຈັນໃຈຫລາຍຂອງພຣະອໍານາດຂອງພຣະເຈົ້າທີ່ໄດ້ບັນທຶກ

ເອົາໄວ້ໃນພຣະຄັມພີ. ພຣະເຈົ້າຈະໄດ້ປະກາດການຈິບຫາຍສິບຢ່າງໂດຍຜ່ານຄົນພວກນີ້: ນ້ຳນິນຈະກາຍເປັນເລືອດ; ກົບຈະມີຢ່າງກາດເກື່ອນໃນແຜ່ນດິນ; ຝູງຮິ້ນ; ຕົວເຫລືອກ; ຝູງສັດລ້ຽງຕາຍ; ເປັນຝີໃນໜັງຂອງຊາວອີຢີບ; ໝາກເຫັບ; ຝູງຕັກແຕນ; ເກີດມືດມົວໃນທົ່ວແຜ່ນດິນ; ແລະໃນທີ່ສຸດກໍແມ່ນການຕາຍຂອງລູກຊາຍກົກຂອງຊາວອີຢີບ. ສິ່ງເຫລົ່ານີ້ເປັນເຫດການໂດຍທັມມະຊາດບໍ່? ຄົງເປັນໄດ້ຍາກແທ້. ມັນໄດ້ເກີດກັບຄົນອີຢີບ, ແລະບໍ່ເຄີຍເກີດຈັກເທື່ອກັບຄົນອິສຣະເອັນທີ່ຢູ່ເມືອງໂກເຊນ. ມັນເກີດແລະໄດ້ຢຸດລົງດ້ວຍຄຳເວົ້າຂອງໂມເຊ. ຄົນເຮັດການນີ້ດ້ວຍເວດມົນຄາຖາຊາວອີຢີບສາມາດເຮັດລຽນແບບໄດ້ພຽງແຕ່ສອງຢ່າງທຳອິດເທົ່ານັ້ນໃນຈຳນວນທັງໝົດສິບຢ່າງ, ແຕ່ວ່າສ່ວນທີ່ເຫລືອນັ້ນເຮັດບໍ່ໄດ້. ຊ້ຳບໍ່ພໍແລ້ວພວກເຂົາຍັງຖືກເຮັດໃຫ້ເຈັບປວດດ້ວຍຝີດ້ວຍ. ຄວາມຈິບຫາຍສ່ວນຫລາຍ ຫລືວ່າເກືອບທັງໝົດນັ້ນໄດ້ແນໃສ່ພວກທີ່ນະມັສການພຣະຕ່າງດ້າວທັງຫລາຍໃນອີຢີບ. ການກະທຳຕອບຂອງຟາໂຣຕໍ່ການຈິບຫາຍແຕ່ລະຢ່າງນັ້ນໄປຕາມວົງຈອນ: ພຣະອົງໃຫ້ເຫັນພຣະອຳນາດ, ໄດ້ລັງເລໃຈຈາກຂັ້ນນຶ່ງໄປເຖິງອີກຂັ້ນນຶ່ງເລື້ອຍ, ແລະແລ້ວຄວາມຈິບຫາຍນັ້ນກໍຍິ່ງຮ້າຍແຮງຂຶ້ນເລື້ອຍໆ; ຕໍ່ມາຈິດໃຈຂອງຟາໂຣກໍຍິ່ງແຂງກະດ້າງຂຶ້ນໄປຕື່ມ.

ການຕາຍຂອງເດັກຊາຍທີ່ເກີດໃໝ່ໃນທີ່ສຸດກໍເຮັດໃຫ້ຟາໂຣເກີດການເອົາໃຈໃສ່. ການເຈັບປວດຄອນຄາງກໍໄດ້ຍິນຂຶ້ນໃນທຸກທົ່ວທີນແຫ່ງ ຊຶ່ງບໍ່ແປກຕ່າງຫຍັງກັບສຽງຄອນຄາງໃນດິນແດນຂອງໂກເຊັນເມື່ອຫລາຍປີກ່ອນນັ້ນທີ່ຟາໂຣໄດ້ສັ່ງໃຫ້ຂ້າເດັກນ້ອຍຊາວເບເຣີ. ດຽວນີ້, ພວກອິສຣະເອັນໄດ້ຖືກຂັບຈາກພວກອີຢີບໃຫ້ໜີອອກໄປ ແລະນຳເອົາຄຳ, ເງິນ, ແລະເຄື່ອງເອ້ຂອງຊາວອີຢີບໄປນຳ. ສີ່ຮ້ອຍສາມສິບປີແຫ່ງຄວາມເປັນທາດຂອງພວກເຂົາໄດ້ຄົບຖ້ວນແລ້ວ; ການອົບພະຍົບກໍໄດ້ເຣີ່ມຕົ້ນເກີດຂຶ້ນ.

ຂ້າພະເຈົ້າໄດ້ເຄີຍຫຽວທາງທີ່ເນັ່ງໄປໂດຍກົງເຖິງການາອານ: ທາງໄຣເວທີ່ເລາະແຄມທະເລຈະໄດ້ນຳເຂົາໄປຜ່ານແຜ່ນດິນຟີລລິສຕິນ. ສຳລັບຊາວອິສຣະເອັນບູຮານນັ້ນ ມັນມີອຸປະສັກທາງດ້ານການທະຫານຂວາງກັ້ນຢູ່ຊຶ່ງຊາວອິສຣະເອັນຍັງບໍ່ທັນໄດ້ຕຽມຕົວສຳລັບປະເຊີນກັບມັນເທື່ອ. ພຣະເຈົ້າໄດ້ຮູ້ສິ່ງເຫລົ່ານີ້ແລ້ວ, ພຣະເຈົ້າຈຶ່ງໄດ້ຈັດທາງເສັ້ນອື່ນໃຫ້ ຊຶ່ງຈະນຳເຂົາໄປຕາມທາງທີ່ປອດພັຍທາງພາກໃຕ້ ແລະທາງໄປສູ່ພູເຂົາຂອງພຣະເຈົ້າທີ່ພຣະອົງຈະໄດ້ປະເຊີນກັບເຂົາ ແລະເຂົາກໍຈະໄດ້ປະເຊີນກັບພຣະອົງເຊັ່ນກັນ.

ພຣະເຈົ້າຊົງຮູ້ຈັກຄວາມຫຼຸ້ງຍາກທີ່ເຮົາສາມາດແບກເອົາໄດ້ ແລະແບກເອົາບໍ່ໄດ້. ເພາະວ່າພຣະເຈົ້າໄດ້ຮູ້ຄວາມອ່ອນແອຂອງພວກເຮົາ, ພຣະອົງຊ່ອຍເຫລືອເຮົາເພື່ອຈະສະສາງສະພາບການຕ່າງໆທີ່ອາດຈະເຮັດໃຫ້ຄວາມເຊື່ອຂອງພວກເຮົາຕໍ່ພຣະອົງອ່ອນແອລົງ. ພຣະເຈົ້າບໍ່ເຄີຍເອົາການທ້າທາຍໃດໆໃຫ້, ຄວາມຫຼຸ້ງຍາກ, ຫລືວ່າການທົດລອງທີ່ໜັກໜ່ວງເກີນໄປ. ໂດຍຜ່ານພຣະວິນຍານຂອງພຣະອົງ, ພຣະເຈົ້າໄດ້ຊ່ອຍເຫລືອເຮົາຫລີກເວັ້ນສະພາບການທີ່ສາມາດເຮັດໃຫ້ຄວາມເຊື່ອອ່ອນແອລົງ. ໂປໂລໄດ້ຂຽນວ່າ, " ພຣະເຈົ້ານັ້ນສັດຊື່, ແລະພຣະອົງຈະບໍ່ປ່ອຍໃຫ້ເຮົາຖືກທົດລອງຈົນເກີນຄວາມສາມາດຂອງພວກເຮົາ " ( 1 ກຣທ 10:13 ).

## ໒. <u>ພຣະເຈົ້າໄດ້ສະຖິດນຳໃນທຸກໆຍາມ</u> ( ອພຍ 13:20-22 )

ໂມເຊແລະຊາວອິສຣະເອັນຈະມີຄວາມຫຼຸ້ງຢາກຫລາຍໃນວັນຂ້າງໜ້າ. ເຫມືອນກັບເດັກນ້ອຍທີ່ໄດ້ແລ່ນໄປຍັງຫ້ອງນອນຂອງພໍ່ແມ່ເມື່ອເວລາຝົນຕົກຟ້າຄະນອງ, ພວກອິສຣະເອັນເຊັ່ນດຽວກໍຕ້ອງການໆສະຖິດຊົງນຳຂອງພຣະເຈົ້າ. ເຊັ່ນດຽວກັນນັ້ນພຣະເຈົ້າໄດ້ນຳພາເຂົາໄປອີກທາງນຶ່ງເພື່ອຫລີກຈາກຄ້າຍທະຫານເພື່ອວ່າໄພ່ພົນຂອງພຣະອົງຈະບໍ່ໄດ້ເສັຽຂວັນ. ພຣະອົງໄດ້ຈັດສັນຍານທີ່ບອກເຖິງການສະຖິດຊົງນຳຂອງພຣະອົງ ແລະສະແດງບອກທາງເດີນໃນຊີວິດຂອງເຂົາ.

ເສົາກ້ອນເມກ ແລະເມກສີແດງທີ່ໄດ້ເວົ້າເຖິງໃນທີ່ນີ້ໃນເທື່ອທຳອິດ; ມັນໄດ້ຖືກຕຽມໄວ້ເພື່ອຈຸດປະສົງຂອງການນຳພາທີ່ມາຈາກເບື້ອງເທິງ. ໃນ ອພຍ 14:19-20 ເສົາກ້ອນເມກ ແລະເມກສີແດງນັ້ນໄດ້ມີສ່ວນກ່ຽວຂ້ອງກັບການປ້ອງກັນດ້ວຍ; ໃນ ອພຍ 33:9-11 ດ້ວຍການສະແດງຈາກເບື້ອງເທິງ. ຄົນທີ່ຂຽນເພງສັຣະເສີນໄດ້ຮູ້ວ່າພຣະເຈົ້າເວົ້າຈາກກ້ອນເມກໃນເວລາຂອງໂມເຊ ແລະຊາມູເອັນ ( ພສສ 99:6-7 ).

ໃນສມັຍຂອງພຣະສັນຍາໃໝ່, ພຣະເຈົ້າໄດ້ສືບຕໍ່ເວົ້າໂດຍຜ່ານການຊົງນຳຂອງພຣະວິນຍານບໍຣິສຸດ. ພຣະ

ອົງຈະຊົງນຳພວກເຮົາໃນຄວາມຈິງ ແລະໄດ້ໃຫ້ທິດທາງສຳລັບການກະທຳໃນອານາຄົດ ( ຢຮ 16:13-14 ). ພຣະອົງໄດ້ຊ່ອຍພວກເຮົາໃຫ້ອະທິຖານ ແລະອະທິຖານເພື່ອພວກເຮົາຕໍ່ພຣະບິດາຕາງເຮົາ ( ຣມ 8:26-28 ). ພຣະວິນຍານໄດ້ຮັກສາພວກເຮົາອອກຈາກບາບ, ແລະໄດ້ປົດປ່ອຍພວກເຮົາອອກຈາກການເປັນຂ້າທາດຂອງພຣະບັນຍັດ ( ຄລຕ 5:16-18 ).

### 3. <u>ພຣະເຈົ້າສູ້ຮົບເພື່ອໄພ່ພົນຂອງພຣະອົງ</u> ( ອພຍ 14:5-6,10,13-14 )

ພຣະເຈົ້າຊົງຕ້ອງການຈະໃຫ້ຊາດທັງຫລາຍໄດ້ຮູ້ຈັກພຣະອົງ. ດ້ວຍການເອົາຊະນະກອງທັບຂອງອີຢິບ, ພຣະເຈົ້າຈະໄດ້ເຮັດໃຫ້ພວກເຂົາໄດ້ຮູ້ພຣະອົງ ໃນຂະນະດຽວກັນນັ້ນກໍໄດ້ສອນອິສຣະເອັນວ່າຈະເພິ່ງພຣະອົງໄດ້ອີ່ຫລີ. ຟາໂຣແລະຂ້າຣາຊການຂອງພຣະອົງ ໄດ້ປ່ຽນໃຈໃຫມ່ຢ່າງວ່ອງໄວທີ່ວ່າຈະໃຫ້ພວກອິສຣະເອັນຫນີໄປແລ້ວຈະໄດ້ຕິດຕາມນຳເຂົາ. ພວກອິສຣະເອັນພາກັນຢ້ານຫລາຍເມື່ອພວກເຂົາໄດ້ເຫັນຣົດຮົບຂອງຟາໂຣໄດ້ຕິດຕາມນຳເຂົາເຂົ້າມາໃກ້ໆ ແລະພວກເຂົາກໍໄດ້ຮ້ອງຂໍໃຫ້ພຣະເຈົ້າຊ່ອຍເຂົາ. ໃນຂະນະດຽວກັນນັ້ນ, ເຂົາກໍໄດ້ຈົ່ມວ່າໃຫ້ໂມເຊທີ່ໄດ້ນຳເຂົາໃຫ້ເຂົ້າຢູ່ໃນສະພາບອັນຫນ້າຢ້ານກົວນີ້.

ໂມເຊໄດ້ໃຫ້ຄຳເວົ້າທີ່ເປັນການຮັບປະກັນພວກເຂົາ. ພວກເຂົາຕ້ອງຕັ້ງໃຈໃຫ້ໄດ້ແລະຈົ່ງສັງເກດເບິ່ງວ່າພຣະເຈົ້າຈະຊ່ອຍເຂົາຢ່າງໃດ. ພວກເຂົາຈະໄດ້ເຫັນການຊ່ອຍໃຫ້ພົ້ນພັຍ; ພວກເຂົາຈະໄດ້ເປັນພະຍານເຖິງການຈິບຫາຍຂອງກອງທັບຟາໂຣ. ພວກເຂົາຈະໄດ້ເຫັນເປັນດັ່ງວ່າພຣະເຈົ້າໄດ້ຮົບເສິກໃຫ້ເຂົາ. ມີເວລາທີ່ພວກເຮົາໄດ້ຮັບຄືກັນກັບຊາວອິສຣະເອັນ ຈຳເປັນຕ້ອງໄດ້ສງົບຢູ່ ແລະເບິ່ງພຣະເຈົ້າທຳງານຂອງພຣະອົງ. ໃນບາງໂອກາດພວກເຮົາກໍໄດ້ຖືກຮ້ອງໃຫ້ຮ່ວມງານນຳພຣະເຈົ້າ ແລະສູ້ທົນພາຍໃຕ້ການນຳພາຂອງພຣະອົງໃນການຮັບຊັຍຊະນະ. ຈະຢູ່ໃນກໍຣະໃດກໍຕາມ ຄົນທີ່ເຊື່ອໃນທຸກວັນນີ້ບໍ່ໄດ້ຢູ່ຄົນດຽວຈັກເທື່ອ.

ຄົນທີ່ເຊື່ອສາມາດຕິດຕາມນ້ຳພຣະທັຍຂອງພຣະເຈົ້າດ້ວຍຄວາມຫມັ້ນໃຈ ເຖິງແມ່ນວ່າເມື່ອເຮັດດັ່ງນັ້ນຫາກນຳຕົນເຂົ້າສູ່ສະພາບທີ່ຫນ້າຢ້ານກົວກໍຕາມ ເພາະວ່າພວກເຂົາສາມາດເພິ່ງພຣະເຈົ້າທີ່ຈະຊ່ອຍເຂົາໄດ້. ບາງຄັ້ງ, ພຣະເຈົ້າໄດ້ຕຽມການປົດປ່ອຍຢ່າງຫນ້າອັສະຈັນໃຈ ( ກຈກ 5:17-20 ). ບາງຄາວ, ພຣະເຈົ້າໄດ້ທຳງານໂດຍຜ່ານຄວາມອ່ອນແອຂອງພວກເຮົາເພື່ອເຮັດໃຫ້ທຸກຄົນໄດ້ຮັບຄວາມຈະແຈ້ງວ່າກຳລັງທັງຫລາຍນັ້ນໄດ້ມາຈາກພຣະອົງ.

### 4. <u>ພຣະເຈົ້ານຳພາຄົນທີ່ເຊື່ອດ້ວຍພຣະກຳລັງ</u> ( ອພຍ 14:31 - 15:2,11-13 )

ເຣື່ອງຕໍ່ໄປນີ້ເປັນເຣື່ອງທີ່ເຫມືອນລະຄອນໃນພຣະຄັມພີເດີມ. ເດັກຊາຍອາຍຸແປດຂວບໄດ້ກັບມາບ້ານຫລັງຈາກໄປໂຮງຮຽນວັນອາທິດມາ ແລະໄດ້ສລູບນິທານເຣື່ອງນຶ່ງໃຫ້ແມ່ເຖົ້າຂອງລາວຟັງດັ່ງນີ້ວ່າ:

ໂມເຊເປັນນາຍພົນທະຫານໃນກອງທັບອິສຣາເອັນ. ກອງທັບນີ້ໄດ້ຖືກສະກັດຢູ່ໃນຣະຫວ່າງທະເລແລະກອງທັບຣົດຮົບຂອງອີຢິບທີ່ກຳລັງເດີນທັບເຂົ້າມາໃກ້ໆ. ໂມເຊໄດ້ໂທຣະສັບເຖິງກອງບັນຊາການເພື່ອຂໍຄວາມຊ່ອຍເຫລືອ ແລະ ເຂົາໄດ້ສັ່ງກອງບິນເຮລິຄອບເຕີຫມູ່ນຶ່ງເພື່ອມາຢ່ອນຂົວຟູນ້ຳເພື່ອຂ້າມທະເລ. ພວກອິສຣາເອັນໄດ້ພາກັນຂ້າມໄປຢ່າງປອດພັຍ ແຕ່ວ່າພວກອີຢິບໄດ້ຕິດຕາມເຂົາໄປ. ແລ້ວໂມເຊໄດ້ໂທຣະສັບເອົາເຄື່ອງບິນຖິ້ມຣະເບີດໃຫ້ມາເພື່ອຖິ້ມລະເບີດທຳລາຍຂົວນັ້ນ. ແມ່ຂອງເດັກຊາຍຄົນນີ້ມີຄວາມສົງສັຍ. " ໂຈເອ, ເປັນຄວາມຈິງບໍທີ່ໄດ້ເກີດຂຶ້ນນັ້ນ? " " ບໍ່ແມ່ນດອກແມ່ ", ເດັກນ້ອຍນັ້ນໄດ້ສາຣະພາບ, " ແຕ່ວ່າຖ້າຂ້ອຍຫາກເລົ່າເຣື່ອງແບບນີ້ຄືທີ່ນາຍຄູຂອງເຮົາໄດ້ເວົ້ານັ້ນ ເຈົ້າຄົງບໍ່ໄດ້ເຊື່ອດອກ! "

ນິທານໃນ ອພຍ 14:15-30 ນັ້ນຕ້ອງການໃຫ້ເປັນເຣື່ອງທີ່ຫນ້າຕື່ນເຕັ້ນກວ່າເດັກນ້ອຍຄົນນີ້ໄດ້ເລົ່າໃຫ້ຟັງນັ້ນ. ເມື່ອໂມເຊໄດ້ເວົ້າເຖິງຄົນອິສຣະເອັນທີ່ໄດ້ຈົ່ມທຸກຕໍ່ພຣະເຈົ້າມານັ້ນ, ພຣະເຈົ້າໄດ້ບອກໂມເຊທຸກຢ່າງທີ່ເພິ່ນກຳລັງຈະໄດ້ທຳນັ້ນ. ກ້ອນເສົາເມກ, ຕາມທັມມະດານັ້ນຈະລອຍໄປກ່ອນຊາວອິສຣາເອັນ, ແຕ່ວ່າໄດ້ມາຢຸດຢູ່ເຄິ່ງກາງຣະຫວ່າງພວກອິສຣາເອັນແລະພວກອີຢິບ. ແລ້ວຄວາມມືດມົວກໍເກີດຂຶ້ນ, ເສົາກ້ອນເມກນັ້ນກໍເປັນໄຟເຮັດໃຫ້ກາງຄືນຮຸ່ງແຈ້ງໄປທົ່ວ. ໂມເຊໄດ້ຍື່ນແຂນອອກໄປທາງທະເລ, ແລະພຣະເຈົ້າໄດ້ຕຽມລົມຕາເວັນອອກຢ່າງແຮງໃຫ້ເປີດຊ່ອງ

ຂອງດິນແຫ້ງ. ດ້ວຍການທີ່ນ້ຳໄດ້ໄຂອອກໃນແຕ່ລະຂ້າງນັ້ນ, ພວກອິສຣເອັນໄດ້ຂ້າມໄປຕາມດິນທີ່ແຫ້ງ. ເມື່ອເສົາເມກສຸກໄດ້ສູງຂຶ້ນ, ແລະພວກອີຢິບໄດ້ຕິດຕາມເຂົາໄປ. ໃນເວລາຮຸ່ງແຈ້ງ, ໂມເຊໄດ້ຍື່ນມືອອກອີກເທື່ອນຶ່ງແລະພຣະເຈົ້າໄດ້ເຮັດໃຫ້ນ້ຳຂຶ້ນຄືນສູ່ລະດັບເດີມ ແລະໄດ້ທຳລາຍກອງທັບຂອງອີຢິບ.

ຂ້າພະເຈົ້າໄດ້ຢູ່ທີ່ອິສຣາເອັນສອງປີທັນທີຫລັງຈາກສົງຄາມຫົກວັນໃນເດືອນມິຖຸນາ 1967, ຂ້າພະເຈົ້າໄດ້ຍິນສຽງເພງຊັຍຊະນະຫລາຍເພງທີ່ຊາວອິສຣາເອັນໄດ້ຫລິ້ນເພື່ອສເລີມສລອງຊັຍຊະນະອັນອັສຈັນຂອງເຂົາ. ເພງເຫລົ່ານັ້ນໄດ້ສັຣະເສີນໃຫ້ກຽດກຳລັງອັນແຂງແຮງຂອງກອງທັບຂອງເຂົາ. ມັນມີຄວາມແຕກຕ່າງແດ່ເລັກນ້ອຍກັບສມັຍຂອງໂມເຊ. ຫລັງຈາກທີ່ໄດ້ເປັນພະຍານຕໍ່ຊັຍຊະນະຂອງພຣະເຈົ້າ, ການຕອບສນອງຂອງອິສຣາເອັນເປັນສອງຢ່າງ. ພວກເຂົາໄດ້ເຊື່ອ, ແລ້ວພວກເຂົາກໍໄດ້ນະມັສການ. ເພງສັຣເສີນຂອງພວກເຂົາໄດ້ຣະບຸເຖິດເຫດການຂອງຄືນນັ້ນທີ່ຫລົງລືມບໍ່ໄດ້, ແລະອ້າງເຫດການເຊັ່ນນັ້ນຕໍ່ພຣະເຈົ້າ. ເພງສັຣະເສີນໄດ້ບັນລະຍາຍການສັຣເສີນພຣະເຈົ້າ, ຍົກສູງພຣະອົງເຫນືອກວ່າພຣະເຈົ້າອື່ນໆ. ສຳລັບຂ້າພະເຈົ້າເມື່ອແນມຫລັງເຖິງເຫດການອັນທ້າທາຍໃນຊີວິດຂອງຂ້າພະເຈົ້າແລ້ວ ແລະຂ້າພະເຈົ້າໄດ້ເຫັນພຣະເຈົ້າໄດ້ກະທຳຕາງຂ້າພະເຈົ້າຢ່າງບໍ່ຍາກຫຽັງ. ການຕອບສນອງຂອງຂ້າພະເຈົ້າຄືພວກອິສຣາເອັນແມ່ນ: ເຊື່ອ ແລະສັຣເສີນພຣະເຈົ້າ. ຖ້າຫາກຄວາມປາຖນາຂອງຄົນທີ່ເຊື່ອຫາກຕິດຕາມພຣະເຈົ້າໃນຄວາມເຊື່ອຢ່າງຈິງໃຈ, ພວກເຮົາຈະໄດ້ພົບກັບເຫດຜົນອັນໃຫຽ່ທີ່ຈະສັຣເສີນພຣະອຳນາດທີ່ບໍ່ມີອັນໃດທຽມທຽບໄດ້ຂອງພຣະອົງ ແລະການນຳພາຂອງພຣະອົງໂດຍຜ່ານຊີວິດຂອງພວກເຮົາ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.com ແປໂດຍ V.S.